## ໝວດທີ 1
## ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ
ມາດຕາ 2 ກອງທຶນພັດທະນາຂັ້ນບ້ານ ຢູ່ ເມືອງທຸກຍາກ
ມາດຕາ 3 ການອະທິບາຍຄຳສັບ
ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານ "ກພບ"
ມາດຕາ 5 ຫຼັກການພື້ນຖານໃນການສ້າງຕັ້ງ "ກພບ"
ມາດຕາ 6 ຂອບເຂດການນຳໃຊ້

## ໝວດທີ 2
## ເງື່ອນໄຂ ແລະ ຂັ້ນຕອນການສ້າງຕັ້ງ

ມາດຕາ 7 ເງື່ອນໄຂການສ້າງຕັ້ງ "ກພບ"
ມາດຕາ 8 ເງື່ອນໄຂຂອງການເປັນສະມາຊິກ
ມາດຕາ 9 ຂັ້ນຕອນການສ້າງຕັ້ງ "ກພບ"
ມາດຕາ 10 ການເຜີຍແຜ່ ແລະ ເກັບກຳຂໍ້ມູນ
ມາດຕາ 11 ການກຳນົດບ້ານເປົ້າໝາຍ
ມາດຕາ 12 ກອງປະຊຸມສ້າງຕັ້ງ
ມາດຕາ 13 ການສະເໜີສ້າງຕັ້ງ
ມາດຕາ 14 ການອະນຸຍາດສ້າງຕັ້ງ
ມາດຕາ 15 ຈັດຝຶກອົບຮົມໃຫ້ຄະນະບໍລິຫານ "ກພບ"

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

ມາດຕາ 16 ໂຄງປະກອບການຈັດຕັ້ງຂອງ "ກພບ"
ມາດຕາ 17 ກອງປະຊຸມສະມາຊິກ "ກພບ"
ມາດຕາ 18 ຄະນະບໍລິຫານ "ກພບ"
ມາດຕາ 19 ຄະນະທີ່ປຶກສາ "ກພບ"
ມາດຕາ 20 ສະມາຊິກຂອງ "ກພບ"

## ໝວດທີ 4
## ແຫຼ່ງທຶນ, ການເງິນ, ການບັນຊີ ແລະ ການລາຍງານ

ມາດຕາ 21 ແຫຼ່ງທຶນຂອງ "ກພບ"
ມາດຕາ 22 ລາຍຮັບ ແລະ ລາຍຈ່າຍ
ມາດຕາ 23 ກຳໄລ ແລະ ຂາດທຶນ
ມາດຕາ 24 ການແບ່ງປັນຜົນ
ມາດຕາ 25 ການບັນທຶກບັນຊີ
ມາດຕາ 26 ການລາຍງານ

## ໝວດທີ 5
## ການປ່ອຍເງິນກູ້

ມາດຕາ 27 ເງື່ອນໄຂການປ່ອຍເງິນກູ້
ມາດຕາ 28 ການປ່ອຍກູ້ ແລະ ວົງເງິນປ່ອຍກູ້ຂອງ “ກພບ”
ມາດຕາ 29 ຂັ້ນຕອນການປ່ອຍກູ້
ມາດຕາ 30 ການກຳນົດອັດຕາດອກເບ້ຍ
ມາດຕາ 31 ການລະເມີດສັນຍາເງິນກູ້
ມາດຕາ 32 ການຮັກສາເງິນສົດ

## ໝວດທີ 6
## ການໂຮມ ແລະ ການຍຸບເລີກ

ມາດຕາ 33 ການໂຮມ
ມາດຕາ 34 ການຍຸບເລີກ

## ໝວດທີ 7
## ຂໍ້ຫ້າມ

ມາດຕາ 35 ຂໍ້ຫ້າມທົ່ວໄປ
ມາດຕາ 36 ຂໍ້ຫ້າມສຳລັບກອງທຶນ
ມາດຕາ 37 ຂໍ້ຫ້າມສຳລັບຄະນະຄຸ້ມຄອງ “ກພບ”

## ໝວດທີ 8
## ຄະນະຄຸ້ມຄອງກອງທຶນ

ມາດຕາ 38 ຄະນະຄຸ້ມຄອງ “ກພບ”
ມາດຕາ 39 ໂຄງປະກອບຂອງຄະນະຄຸ້ມຄອງ “ກພບ” ຂັ້ນສູນກາງ
ມາດຕາ 40 ໂຄງປະກອບຂອງຄະນະຄຸ້ມຄອງ “ກພບ” ຂັ້ນແຂວງ
ມາດຕາ 41 ໂຄງປະກອບຂອງຄະນະຄຸ້ມຄອງ “ກພບ” ຂັ້ນເມືອງ
ມາດຕາ 42 ສິດ ແລະ ໜ້າທີ່ຂອງຄະນະຄຸ້ມຄອງ “ກພບ”
ມາດຕາ 43 ກອງເລຂາຄະນະຄຸ້ມຄອງ “ກພບ”
ມາດຕາ 44 ສິດ ແລະ ໜ້າທີ່ຂອງກອງເລຂາຄະນະຄຸ້ມຄອງ “ກພບ”

## ໝວດທີ 9
## ການຄຸ້ມຄອງ ແລະ ການກວດກາກອງທຶນ

ມາດຕາ 45 ການຄຸ້ມຄອງ “ກພບ”
ມາດຕາ 46 ສິດ ແລະ ໜ້າທີ່ຂອງ ກົມພັດທະນາຊົນນະບົດ
ມາດຕາ 47 ສິດ ແລະ ໜ້າທີ່ຂອງຂະແໜງພັດທະນາຊົນນະບົດ
ມາດຕາ 48 ສິດ ແລະ ໜ້າທີ່ຂອງໜ່ວຍງານພັດທະນາຊົນນະບົດ

ມາດຕາ 49 ການກວດກາ "ກພບ"
ມາດຕາ 50 ເນື້ອໃນການກວດກາ
ມາດຕາ 51 ການແກ້ໄຂຂໍ້ຂັດແຍ່ງ

ໝວດທີ 10
ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 52 ນະໂຍບາຍຕໍ່ຜູ້ມີຜົນງານ
ມາດຕາ 53 ມາດຕະການຕໍ່ຜູ້ລະເມີດ

ໝວດທີ 11
ບົດບັນຍັດສຸດທ້າຍ

ມາດຕາ 54 ການຈັດຕັ້ງປະຕິບັດ
ມາດຕາ 55 ຜົນສັກສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1700/ກປ
ນະຄອນຫຼວງວຽງຈັນ, ວັນທີ 14 MAR 2023

# ຂໍ້ຕົກລົງ
## ວ່າດ້ວຍ ກອງທຶນພັດທະນາຂັ້ນບ້ານ ຢູ່ ເມືອງທຸກຍາກ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ບົດບັນທຶກການມອບ-ຮັບກອງທຶນພັດທະນາບ້ານ ລະຫວ່າງ ຄະນະກຳມະການແຜນການ ແລະ ການລົງທຶນ ແລະ ຄະນະຊີ້ນຳພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແຫ່ງຊາດ, ຄັ້ງວັນທີ 20 ພະຈິກ 2007;
- ອີງຕາມ ໜັງສືສະເໜີຂອງ ກົມພັດທະນາຊົນນະບົດ ສະບັບເລກທີ 0296/ກພຊ, ລົງວັນທີ 24 ມີນາ 2022;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0486/ຫກ, ລົງວັນທີ 22 ກຸມພາ 2023.

### ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນພັດທະນາຂັ້ນບ້ານ ຢູ່ ເມືອງທຸກຍາກ ເພື່ອເປັນບ່ອນອີງແກ່ການສ້າງຕັ້ງ ແລະ ການຄຸ້ມຄອງຂອງກອງທຶນພັດທະນາຂັ້ນບ້ານ ຢູ່ ເມືອງທຸກຍາກ ໃຫ້ມີຜົນສັກສິດ ແລະ ໃຫ້ມີຄວາມຍືນຍົງ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດໃຫ້ມີຄວາມໂປ່ງໃສ, ເປັນລະບົບ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງການຈັດຕັ້ງ ແລະ ສະມາຊິກກອງທຶນພັດທະນາຂັ້ນບ້ານ ຢູ່ ເມືອງທຸກຍາກ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ ແລະ ສາມາດຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ.

**ມາດຕາ 2 ກອງທຶນພັດທະນາຂັ້ນບ້ານ ຢູ່ ເມືອງທຸກຍາກ**

ກອງທຶນພັດທະນາຂັ້ນບ້ານ ຢູ່ເມືອງທຸກຍາກ ແມ່ນກອງທຶນຂອງປະຊາຊົນ ທີ່ສະໝັກໃຈສ້າງຕັ້ງຂຶ້ນ ເພື່ອສ້າງລາຍຮັບ ແລະ ພັດທະນາຊີວິດການເປັນຢູ່ຂອງປະຊາຊົນທຸກຍາກ.

ກອງທຶນພັດທະນາຂັ້ນບ້ານ ຢູ່ ເມືອງທຸກຍາກ ຕໍ່ໄປນີ້ເອີ້ນຫຍໍ້ວ່າ "**ກພບ**" ແມ່ນ ການຈັດຕັ້ງໜຶ່ງທີ່ຄຸ້ມຄອງທຶນໝູນວຽນພາຍໃນບ້ານ ຊຶ່ງເປັນນະໂຍບາຍສົ່ງເສີມດ້ານທຶນຮອນຂອງລັດ ໃຫ້ແກ່ ກອງທຶນທີ່ຢູ່ໃນເມືອງທຸກຍາກ ສາມາດກູ້ຢືມເຂົ້າໃນການຜະລິດ ກະສິກຳ, ຫັດຖະກຳ, ຄ້າຂາຍ, ບໍລິການ ແລະ ອາຊີບອື່ນ ລວມທັງ

ການແກ້ໄຂຄວາມຈຳເປັນອັນຮີບດ່ວນ ແລະ ສ້າງສະຫວັດດີການທີ່ດີ ແກ່ປະຊາຊົນໃນບ້ານ ຕາມທິດນຳ ເພິ່ງຕົນເອງ ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

**ມາດຕາ 3** ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເງິນກູ້ໄລຍະສັ້ນ** ໝາຍເຖິງ ກຳນົດເວລາການກູ້ຢືມ ແລະ ສິ່ງຕົ້ນທຶນໃຫ້ແກ່ "ກພບ" ພາຍໃນ ໜຶ່ງ ປີ ຫຼື ໜຶ່ງລະດູການຜະລິດ;
2. **ເງິນກູ້ໄລຍະກາງ** ໝາຍເຖິງ ກຳນົດເວລາການກູ້ຢືມ ແລະ ສິ່ງຕົ້ນທຶນໃຫ້ແກ່ "ກພບ" ຫຼາຍກວ່າ ໜຶ່ງ ປີ ເຖິງ ສອງ ປີ;
3. **ເມືອງທຸກຍາກ** ໝາຍເຖິງ ເມືອງທີ່ຍັງບໍ່ທັນພົ້ນທຸກ ຕາມມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ທີ່ໄດ້ກຳນົດໄວ້ ໃນແຕ່ລະໄລຍະ;
4. **ບ້ານທຸກຍາກ** ໝາຍເຖິງ ບ້ານທີ່ຍັງບໍ່ທັນພົ້ນທຸກ ຕາມມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ທີ່ໄດ້ກຳນົດໄວ້ ໃນແຕ່ລະໄລຍະ.

**ມາດຕາ 4** ນະໂຍບາຍຂອງລັດ ກ່ຽວກັບວຽກງານ "ກພບ"

ລັດສົ່ງເສີມວຽກງານ "ກພບ" ດ້ວຍການສ້າງເງື່ອນໄຂທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານດັ່ງກ່າວ ເປັນຕົ້ນ ດ້ານງົບປະມານ, ການກໍ່ສ້າງໂຄງລ່າງພື້ນຖານ, ການພັດທະນາຊັບພະຍາກອນມະນຸດ, ການຈັດສັນການນຳໃຊ້ທີ່ດິນ, ພາສີ, ອາກອນ, ວິຊາການ, ເຕັກໂນໂລຊີ, ການຕະຫຼາດ, ການຄົ້ນຄວ້າທາງດ້ານວິທະຍາສາດ ແລະ ຂໍ້ມູນຂ່າວສານ.

ລັດຊຸກຍູ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃນການເຂົ້າຮ່ວມ ແລະ ສະໜັບສະໜູນວຽກງານ "ກພບ" ເປັນຕົ້ນ ການແລກປ່ຽນບົດຮຽນທາງດ້ານວິຊາການ, ເຕັກໂນໂລຊີ, ທຶນຮອນ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ໃນການບໍລິຫານ ແລະ ການຈັດການ "ກພບ".

**ມາດຕາ 5** ຫຼັກການພື້ນຖານໃນການສ້າງຕັ້ງ "ກພບ"

ວຽກງານ "ກພບ" ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ;
2. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນສິດ ແລະ ຜົນປະໂຫຍດ ຂອງລັດ, ກອງທຶນ ແລະ ສະມາຊິກ "ກພບ";
4. ຮັບປະກັນຄວາມສະເໝີພາບ, ຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ຄວາມຍຸຕິທຳ.

**ມາດຕາ 6** ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານ "ກພບ" ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ບັນດາເມືອງທຸກຍາກ ຢູ່ ສປປ ລາວ ຊຶ່ງແມ່ນລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ກຳນົດໃນແຕ່ລະໄລຍະ.

## ໝວດທີ 2
## ເງື່ອນໄຂ ແລະ ຂັ້ນຕອນການສ້າງຕັ້ງ

**ມາດຕາ 7** ເງື່ອນໄຂການສ້າງຕັ້ງ "ກພບ"

ການສ້າງຕັ້ງ "ກພບ" ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ບ້ານທຸກຍາກ ທີ່ນອນຢູ່ໃນເມືອງທຸກຍາກ;

2. ມີສະມາຊິກ ຢ່າງໜ້ອຍ ສິບ ຄອບຄົວ ທີ່ເຕົ້າໂຮມກັນສ້າງຕັ້ງເປັນກຸ່ມທີ່ມີການຈັດຕັ້ງ ແລະ ໄດ້ຮັບອະນຸຍາດສ້າງຕັ້ງກຸ່ມ ຈາກຂະແໜງການກ່ຽວຂ້ອງ;
3. ມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ໃນການບໍລິຫານ "ກພບ" ທີ່ມາຈາກອົງການປົກຄອງ ຂອງບ້ານ.

### ມາດຕາ 8 ເງື່ອນໄຂຂອງການເປັນສະມາຊິກ

ສະມາຊິກຂອງ "ກພບ" ແມ່ນຖືເອົາຄອບຄົວເປັນຫຼັກ ໂດຍມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີຖິ່ນຖານຢູ່ພາຍໃນບ້ານ ແລະ ມີປື້ມສໍາມະໂນຄົວ ຢ່າງຖືກຕ້ອງ;
2. ມີຄວາມຕື່ນຕົວ, ສະໝັກໃຈ, ມີກໍາລັງແຮງງານ, ດຸໝັ່ນ, ຫ້າວຫັນ ແລະ ມີພື້ນຖານການຜະລິດທາງດ້ານກະສິກໍາ, ຫັດຖະກໍາ, ຄ້າຂາຍ ຫຼື ບໍລິການອື່ນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
3. ບໍ່ມີໜີ້ສິນຄຸມເຄືອ ຫຼື ມີປະຫວັດຕົວະຍົວະຫຼອກລວງ.

### ມາດຕາ 9 ຂັ້ນຕອນການສ້າງຕັ້ງ "ກພບ"

ການສ້າງຕັ້ງ "ກພບ" ຕ້ອງປະຕິບັດຂັ້ນຕອນ ດັ່ງນີ້:

1. ການເຜີຍແຜ່ ແລະ ເກັບກໍາຂໍ້ມູນ;
2. ການກໍານົດບ້ານເປົ້າໝາຍ;
3. ກອງປະຊຸມສ້າງຕັ້ງ;
4. ການສະເໜີສ້າງຕັ້ງ;
5. ການອະນຸຍາດສ້າງຕັ້ງ;
6. ຈັດຝຶກອົບຮົມໃຫ້ຄະນະບໍລິຫານ "ກພບ".

### ມາດຕາ 10 ການເຜີຍແຜ່ ແລະ ເກັບກໍາຂໍ້ມູນ

ຄະນະຄຸ້ມຄອງ "ກພບ" ຂັ້ນເມືອງ ສົມທົບກັບ ອົງການປົກຄອງບ້ານ ເຜີຍແຜ່ນິຕິກໍາ ກ່ຽວກັບການສ້າງຕັ້ງ ແລະ ຄຸ້ມຄອງ "ກພບ" ເປັນຕົ້ນ ຂໍ້ຕົກລົງ, ກົດລະບຽບ ໃຫ້ແກ່ ຄະນະບ້ານ, ໜ່ວຍງານ, ຫົວໜ້າຈຸ, ຜູ້ຊົງຄຸນວຸດທິ ແລະ ປະຊາຊົນ ເພື່ອໃຫ້ເຂົ້າໃຈເຖິງ ເນື້ອໃນ, ຈຸດປະສົງ, ຄວາມສໍາຄັນ ແລະ ຫຼັກການຂອງການສ້າງຕັ້ງ ແລະ ການຄຸ້ມຄອງ "ກພບ".

ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ສົມທົບກັບ ອົງການປົກຄອງບ້ານ ເກັບກໍາຂໍ້ມູນຂອງຄອບຄົວເປົ້າໝາຍ ໂດຍສະເພາະ ທີ່ຢູ່ອາໄສ, ຊັບສິນ ຫຼື ເຄື່ອງໃຊ້ຕ່າງໆ ໃນການດໍາລົງຊີວິດ, ຈໍານວນແຮງງານ, ອາຊີບ, ແຫຼ່ງລາຍຮັບທີ່ໝັ້ນຄົງ, ການຊົມໃຊ້ນໍ້າສະອາດ ແລະ ພະລັງງານໝັ້ນຄົງ ລວມທັງການເຂົ້າເຖິງການບໍລິການດ້ານສາທາລະນະຂັ້ນພື້ນຖານ.

### ມາດຕາ 11 ການກໍານົດບ້ານເປົ້າໝາຍ

ພາຍຫຼັງເກັບກໍາຂໍ້ມູນບ້ານ ຕາມທີ່ໄດ້ກໍານົດໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ປະສານສົມທົບກັບ ຄະນະກໍາມະການຄຸ້ມຄອງ "ກພບ" ຂັ້ນເມືອງ ແລະ ພາກສ່ວນກ່ຽວຂ້ອງ ຈັດກອງປະຊຸມຄົ້ນຄວ້າ, ກໍານົດບ້ານເປົ້າໝາຍ ແລະ ຈັດລຽງບຸລິມະສິດການສ້າງຕັ້ງ "ກພບ" ພາຍໃນເມືອງຂອງຕົນ ພ້ອມທັງແຈ້ງໃຫ້ອົງການປົກຄອງບ້ານທີ່ກ່ຽວຂ້ອງ ກະກຽມຈັດກອງປະຊຸມສ້າງຕັ້ງ "ກພບ".

### ມາດຕາ 12 ກອງປະຊຸມສ້າງຕັ້ງ

ພາຍຫຼັງໄດ້ຮັບແຈ້ງການຈາກຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ, ອົງການປົກຄອງບ້ານ ຕ້ອງຈັດກອງປະຊຸມປຶກສາຫາລື ແລະ ກະກຽມສ້າງຕັ້ງ "ກພບ" ພາຍໃນກໍານົດເວລາ ສາມສິບ ວັນ ນັບແຕ່ວັນໄດ້ຮັບແຈ້ງການເປັນຕົ້ນໄປ ເພື່ອຄັດເລືອກ ຄະນະບໍລິຫານ, ຄະນະທີ່ປຶກສາ, ຄະນະກວດກາ ແລະ ສະມາຊິກ

"ກພບ" ພ້ອມທັງ ພິຈາລະນາຮັບຮອງເອົາແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານ ແລະ ກົດລະບຽບພາຍໃນຂອງ "ກພບ".

**ມາດຕາ 13 ການສະເໜີສ້າງຕັ້ງ**

ບ້ານ ທີ່ມີຈຸດປະສົງສ້າງຕັ້ງ "ກພບ" ຕ້ອງປະກອບເອກະສານ ສະເໜີຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ບ່ອນທີ່ "ກພບ" ຕັ້ງຢູ່ ເພື່ອພິຈາລະນາ.

ເອກະສານປະກອບຂໍສ້າງຕັ້ງ "ກພບ" ມີ ດັ່ງນີ້:

1. ຄຳຮ້ອງຂໍສ້າງຕັ້ງ "ກພບ" ຕາມແບບພິມທີ່ກົມພັດທະນາຊົນນະບົດ ກຳນົດ;
2. ບັນຊີລາຍຊື່ ຄະນະບໍລິຫານ, ຄະນະທີ່ປຶກສາ, ຄະນະກວດກາ ແລະ ສະມາຊິກຂອງ "ກພບ";
3. ບົດບັນທຶກກອງປະຊຸມສ້າງຕັ້ງ "ກພບ";
4. ກົດລະບຽບຂອງ "ກພບ";
5. ແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານ "ກພບ".

**ມາດຕາ 14 ການອະນຸຍາດສ້າງຕັ້ງ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍສ້າງຕັ້ງ "ກພບ" ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ຕ້ອງຄົ້ນຄວ້າ ແລະ ນຳສະເໜີເຈົ້າເມືອງ ພິຈາລະນາອະນຸຍາດສ້າງຕັ້ງ ພາຍໃນກຳນົດເວລາ ຊາວ ວັນ ນັບແຕ່ວັນຮັບເອກະສານເປັນຕົ້ນໄປ. ໃນກໍລະນີປະຕິເສດການອະນຸຍາດສ້າງຕັ້ງ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງເຫດຜົນ.

ອົງການປົກຄອງບ້ານ ຕ້ອງສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດພິທີປະກາດສ້າງຕັ້ງ "ກພບ" ຢ່າງເປັນທາງການ ພາຍໃນກຳນົດເວລາ ສິບ ວັນ ນັບແຕ່ວັນໄດ້ຮັບຂໍ້ຕົກລົງອະນຸຍາດສ້າງຕັ້ງ "ກພບ" ເປັນຕົ້ນໄປ.

ໃບອະນຸຍາດສ້າງຕັ້ງ "ກພບ" ມີອາຍຸການນຳໃຊ້ ຕະຫຼອດໄລຍະການດຳເນີນກິດຈະການຂອງ "ກພບ".

**ມາດຕາ 15 ຈັດຝຶກອົບຮົມໃຫ້ຄະນະບໍລິຫານ "ກພບ"**

ພາຍຫຼັງໄດ້ຮັບອະນຸຍາດສ້າງຕັ້ງ "ກພບ" ຂະແໜງກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການດຳເນີນການຝຶກອົບຮົມ ໃຫ້ແກ່ບຸກຄະລາກອນຂອງ "ກພບ" ເພື່ອສ້າງຂີດຄວາມສາມາດ ດ້ານການບໍລິຫານ, ເຕັກນິກການຜະລິດ, ການປຸງແຕ່ງສ້າງມູນຄ່າເພີ່ມ, ການຕະຫຼາດ ແລະ ການອະນຸລັກສິ່ງແວດລ້ອມ ລວມທັງການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 16 ໂຄງປະກອບການຈັດຕັ້ງຂອງ "ກພບ"**

ໂຄງປະກອບການຈັດຕັ້ງຂອງກອງທຶນພັດທະນາຂັ້ນບ້ານ ຢູ່ ເມືອງທຸກຍາກ ປະກອບ ດ້ວຍ:

1. ກອງປະຊຸມສະມາຊິກ "ກພບ";
2. ຄະນະບໍລິຫານ "ກພບ";
3. ຄະນະທີ່ປຶກສາ "ກພບ";
4. ສະມາຊິກຂອງ "ກພບ".

**ມາດຕາ 17 ກອງປະຊຸມສະມາຊິກ "ກພບ"**

ກອງປະຊຸມສະມາຊິກ "ກພບ" ແມ່ນ ການຈັດຕັ້ງສູງສຸດຂອງ "ກພບ" ຊຶ່ງ ປະກອບ ດ້ວຍ:

1. ກອງປະຊຸມສາມັນ ເປີດຂຶ້ນ ຢ່າງໜ້ອຍ ປີ ລະຄັ້ງ;

2. ກອງປະຊຸມວິສາມັນ ເປີດຂຶ້ນເມື່ອໃດກໍ່ໄດ້ ເພື່ອພິຈາລະນາບັນຫາສຳຄັນ, ຈຳເປັນ ແລະ ຮີບດ່ວນ ຕາມການຮຽກເຊີນຂອງ ປະທານ "ກພບ" ຫຼື ສະມາຊິກທີ່ມີຈຳນວນ ໜຶ່ງສ່ວນສີ່ ຂອງສະມາຊິກທັງໝົດ.

ກອງປະຊຸມ ສະມາຊິກ "ກພບ" ຈະເປີດໄດ້ກໍຕໍ່ເມື່ອ ມີສະມາຊິກ ແຕ່ ສອງສ່ວນສາມ ຂຶ້ນໄປ ຂອງຈຳນວນສະມາຊິກທັງໝົດ.

**ມາດຕາ 18 ຄະນະບໍລິຫານ "ກພບ"**

ຄະນະບໍລິຫານ "ກພບ" ເປັນຜູ້ບໍລິຫານວຽກທຸກຢ່າງຂອງ "ກພບ" ແລະ ເປັນຕົວແທນຂອງ "ກພບ" ໃນການພົວພັນວຽກງານກັບບຸກຄົນພາຍນອກ ໂດຍມີການແບ່ງປັນວຽກງານໃຫ້ແຕ່ລະຄົນຮັບຜິດຊອບ ຊຶ່ງປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ ຈຳນວນໜຶ່ງ ຕາມການກຳນົດຂອງ "ກພບ" ໂດຍໄດ້ຮັບການເລືອກຕັ້ງຈາກກອງປະຊຸມສະມາຊິກ "ກພບ", ມີອາຍຸການ ຫ້າ ປີ ແລະ ສາມາດສະໝັກເລືອກຕັ້ງໄດ້ອີກ.

ຜູ້ຈະເປັນຄະນະບໍລິຫານ "ກພບ" ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນຜູ້ທີ່ອາໄສຢູ່ໃນບ້ານ ມາບໍ່ຕ່ຳກວ່າ ສອງ ປີ;
2. ເປັນສະມາຊິກກອງທຶນ, ມີສຸຂະພາບແຂງແຮງດີ ແລະ ມີ ອາຍຸ ແຕ່ ສິບແປດ ຫາ ຫົກສິບ ປີ;
3. ມີຄຸນສົມບັດ, ມີຄວາມສັດຊື່ບໍລິສຸດ ແລະ ເຫັນດີເຫັນພ້ອມຈາກມະຫາຊົນ ແລະ ສະມາຊິກສ່ວນໃຫຍ່, ມີຄວາມສາມາດ, ລະດັບການສຶກສາຈົບຊັ້ນປະຖົມຂຶ້ນໄປ, ມີຄວາມເສຍສະຫຼະເພື່ອສ່ວນ ລວມ;
4. ເປັນຜູ້ທີ່ເຂົ້າໃຈ ຕໍ່ແຜນດຳເນີນງານ ແລະ ກົດລະບຽບຂອງ "ກພບ" ລວມທັງຂໍ້ຕົກລົງສະບັບນີ້ເປັນຢ່າງດີ.

ຄະນະບໍລິຫານ "ກພບ" ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການເຄື່ອນໄຫວວຽກງານຂອງ "ກພບ";
2. ສ້າງກົດລະບຽບ ແລະ ສ້າງແຜນດຳເນີນງານຂອງ "ກພບ" ພ້ອມທັງຊຸກຍູ້ການຈັດຕັ້ງປະຕິບັດແຜນການດັ່ງກ່າວ;
3. ກຳນົດອັດຕາດອກເບ້ຍເງິນກູ້ ຂອງ "ກພບ";
4. ຄົ້ນຄວ້າພິຈາລະນາອະນຸມັດ ການຂໍກູ້ຢືມຂອງສະມາຊິກ;
5. ຈັດຫາປັດໃຈ ການຜະລິດ, ການຕະຫຼາດ ແລະ ການບໍລິການ ໃຫ້ສະມາຊິກ;
6. ປົກປ້ອງສິດ ແລະ ຜົນປະໂຫຍດຂອງ "ກພບ" ແລະ ສະມາຊິກ;
7. ຮຽກໂຮມ ແລະ ຈັດກອງປະຊຸມຂອງ "ກພບ";
8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງ "ກພບ" ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນເມືອງ ບ່ອນທີ່ "ກພບ" ຕັ້ງຢູ່ ຢ່າງເປັນປົກກະຕິ;
9. ປະສານສົມທົບກັບ ໜ່ວຍງານ ຫຼື ພາກສ່ວນອື່ນ ທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ກ່ຽວກັບວຽກງານ "ກພບ";
10. ສະເໜີຂໍນະໂຍບາຍ, ການຊ່ວຍເຫຼືອ ດ້ານເຕັກນິກ, ວິຊາການ ແລະ ທຶນຮອນ ຈາກພາກສ່ວນກ່ຽວຂ້ອງ ທັງພາກລັດ ແລະ ພາກເອກະຊົນ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 19 ຄະນະທີ່ປຶກສາ "ກພບ"**

ຄະນະທີ່ປຶກສາ "ກພບ" ເປັນຜູ້ໃຫ້ຄຳປຶກສາ ແກ່ ຄະນະບໍລິຫານຂອງ "ກພບ" ໂດຍມີການແບ່ງວຽກງານໃຫ້ແຕ່ລະຄົນຮັບຜິດຊອບ ຊຶ່ງປະກອບດ້ວຍ ເລຂາພັກບ້ານ, ແນວລາວສ້າງຊາດບ້ານ, ສະຫະພັນແມ່ຍິງບ້ານ ແລະ ຜູ້ຊົງຄຸນນະວຸດ ຈຳນວນໜຶ່ງ ຕາມການກຳນົດຂອງກົດລະບຽບ "ກພບ" ໂດຍໄດ້ຮັບການເລືອກຕັ້ງຈາກກອງປະຊຸມຂອງ "ກພບ", ມີອາຍຸການ ຫ້າ ປີ ແລະ ສາມາດສະໝັກເລືອກຕັ້ງໄດ້ອີກ.

ຄະນະທີ່ປຶກສາ "ກພບ" ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມ ກອງປະຊຸມ ນຳຄະນະບໍລິຫານ "ກພບ" ແລະ ກອງປະຊຸມຂອງສະມາຊິກທຸກຄັ້ງ;
2. ເຂົ້າຮ່ວມ ສຶກສາອົບຮົມ ແລະ ໄກ່ເກ່ຍບັນຫາຕ່າງໆ ທີ່ເກີດຂຶ້ນໃນ "ກພບ";
3. ກວດກາການນຳໃຊ້ ທຶນ, ຊັບສິນ, ໜີ້ສິນ ທາງດ້ານການບັນຊີ ແລະ/ຫຼື ການເງິນ ຂອງ "ກພບ" ຕາມກົດລະບຽບຂອງ "ກພບ";
4. ເຕົ້າໂຮມຄວາມສາມັກຄີພາຍໃນສະມາຊິກ ເພື່ອປັບປຸງວຽກງານ "ກພບ" ໃຫ້ມີຄວາມເຂັ້ມແຂງ ແລະ ມີຄວາມຍືນຍົງ.

**ມາດຕາ 20 ສະມາຊິກຂອງ "ກພບ"**

ສະມາຊິກຂອງ "ກພບ" ແມ່ນ ຫົວໜ່ວຍຄອບຄົວ, ມີຄວາມສະໝັກໃຈ ແລະ ເຫັນດີເຫັນພ້ອມກັນແລ້ວຂຽນຄຳຮ້ອງຂໍເປັນສະມາຊິກ ຕາມກົດລະບຽບຂອງ "ກພບ", ສະມາຊິກຂອງ "ກພບ" ມີ ສິດ ດັ່ງນີ້:

1. ໄດ້ຮັບການຍົກລະດັບຄວາມຮູ້ ທາງດ້ານເຕັກນິກ, ວິຊາການ;
2. ໄດ້ຮັບການຊຸກຍູ້, ຊ່ວຍເຫຼືອ ໃນການເຂົ້າເຖິງແຫຼ່ງທຶນ, ຕະຫຼາດ, ຂໍ້ມູນຂ່າວສານ ແລະ ດ້ານອື່ນ;
3. ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ເປັນຄະນະບໍລິຫານ "ກພບ";
4. ສະເໜີເປີດກອງປະຊຸມວິສາມັນ ຕາມເງື່ອນໄຂທີ່ກຳນົດໄວ້ກົດລະບຽບຂອງ "ກພບ";
5. ສະເໜີໃຫ້ມີການກວດກາ ຊັບສິນ, ບັນຊີ ແລະ ການເງິນຂອງ "ກພບ" ໃນກໍລະນີທີ່ເຫັນວ່າບໍ່ມີຄວາມໂປ່ງໃສ;
6. ສະເໜີແຜນກູ້ຢືມ ຕາມກໍລະນີ ຕາມນະໂຍບາຍ ຂອງກອງທຶນ;
7. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ກົດລະບຽບຂອງ "ກພບ".

ສະມາຊິກ "ກພບ" ມີ ພັນທະ ດັ່ງນີ້:

1. ສະເໜີແຜນການຜະລິດ, ລາຍຮັບ, ລາຍຈ່າຍ ແລະ ຄາດຄະເນຜົນໄດ້ຮັບ ກ່ຽວກັບການເຄື່ອນໄຫວການຜະລິດຕ່າງໆ ພາຍໃນຄອບຄົວຂອງຕົນ;
2. ຮັກສາຄວາມສາມັກຄີ ລະຫວ່າງສະມາຊິກ "ກພບ" ດ້ວຍກັນ;
3. ເຂົ້າຮ່ວມກອງປະຊຸມ, ສະເໜີ, ປະກອບຄຳເຫັນ ແລະ ລົງຄະແນນສຽງຂອງ "ກພບ";
4. ສົ່ງຄືນເງິນກູ້ ແລະ ດອກເບ້ຍ ຕາມທີ່ກຳນົດໄວ້ໃນສັນຍາກູ້ຢືມ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ກົດລະບຽບຂອງ "ກພບ".

## ໝວດທີ 4
## ແຫຼ່ງທຶນ, ການເງິນ, ການບັນຊີ ແລະ ການລາຍງານ

**ມາດຕາ 21 ແຫຼ່ງທຶນຂອງ "ກພບ"**

ແຫຼ່ງທຶນຂອງ "ກພບ" ປະກອບ ມີ ດັ່ງນີ້:

1. ທຶນ ຈາກລັດຖະບານ;

2. ທຶນຊ່ວຍເຫຼືອ ຈາກພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
3. ທຶນອື່ນໆ;

**ມາດຕາ 22 ລາຍຮັບ ແລະ ລາຍຈ່າຍ**

ລາຍຮັບຂອງ "ກພບ" ປະກອບ ມີ ດັ່ງນີ້:

1. ລາຍຮັບຈາກດອກເບ້ຍເງິນກູ້;
2. ລາຍຮັບຈາກດອກເບ້ຍທະນາຄານທີ່ກອງທຶນນຳເງິນໄປຝາກ;
3. ລາຍຮັບຈາກຄ່າບໍລິການ ຂອງ "ກພບ".

ລາຍຈ່າຍຂອງ "ກພບ" ປະກອບ ມີ ດັ່ງນີ້:

1. ລາຍຈ່າຍໃນການບໍລິຫານ;
2. ລາຍຈ່າຍການສ້າງຄັງແຮ;
3. ລາຍຈ່າຍອື່ນໆ ຕາມກົດລະບຽບຂອງ "ກພບ".

**ມາດຕາ 23 ກຳໄລ ແລະ ຂາດທຶນ**

ກຳໄລຂອງ "ກພບ" ແມ່ນສ່ວນຜິດດ່ຽງທີ່ເປັນບວກ ລະຫວ່າງ ຍອດລາຍຮັບ ແລະ ຍອດລາຍຈ່າຍໃນປີ. ກອງປະຊຸມ "ກພບ" ເປັນຜູ້ຕົກລົງ ແບ່ງປັນກຳໄລສຸດທິ ດັ່ງນີ້:

1. ຫັກເຂົ້າຄັງສະສົມ ເພື່ອຂະຫຍາຍ "ກພບ" ໄປສູ່ບ້ານອື່ນ ຢ່າງໜ້ອຍ ຊາວຫ້າ ສ່ວນຮ້ອຍ ຂອງ ກຳໄລສຸດທິໃນແຕ່ລະປີ ເຂົ້າໃນຄັງດັ່ງກ່າວ ຈົນກວ່າລວມຍອດຂອງຄັງສະສົມ ຈະເຖິງ ຊາວ ສ່ວນຮ້ອຍ ຂອງທຶນທັງໝົດ ແລະ ຕ້ອງຮັກສາໃຫ້ຢູ່ໃນລະດັບດັ່ງກ່າວ ຕະຫຼອດໄລຍະຂອງ ການເຄື່ອນໄຫວຂອງກອງທຶນ;
2. ຫັກເຂົ້າຄັງອື່ນໆ ທີ່ໄດ້ກຳນົດໄວ້ໃນກົດລະບຽບ ຂອງ "ກພບ".

ການຂາດທຶນຂອງ "ກພບ" ແມ່ນສ່ວນຜິດດ່ຽງເປັນລົບ ລະຫວ່າງ ຍອດລາຍຮັບ ແລະ ຍອດລາຍຈ່າຍ ໃນປີ, ໃນກໍລະນີນີ້ ໃຫ້ "ກພບ" ນຳໃຊ້ເງິນໃນຄັງສະສົມຕາມລະບຽບການ.

**ມາດຕາ 24 ການແບ່ງປັນຜົນ**

ການແບ່ງປັນຜົນ "ກພບ" ແມ່ນ ລາຍຮັບຈາກ ດອກເບ້ຍເງິນກູ້, ຄ່າປັບໃໝ, ດອກເບ້ຍທະນາຄານ ລວມທັງໝົດ ແມ່ນ ຄິດໄລ່ເປັນ ຮ້ອຍສ່ວນຮ້ອຍ ແລ້ວຈັດແບ່ງ ດັ່ງນີ້:

| | | |
|---|---|---|
| 1. | ຄະນະທີ່ປຶກສາ - ກວດກາ "ກພບ" | ສິບຫ້າ ສ່ວນຮ້ອຍ; |
| 2. | ຄະນະບໍລິຫານ "ກພບ" | ຊາວ ສ່ວນຮ້ອຍ; |
| 3. | ຄັງແຮກັນໜີ້ເສຍ | ຊາວຫ້າ ສ່ວນຮ້ອຍ; |
| 4. | ຄັງບໍລິຫານ | ຊາວ ສ່ວນຮ້ອຍ; |
| 5. | ຄັງຊຸກຍູ້ບ້ານ | ຫ້າ ສ່ວນຮ້ອຍ; |
| 6. | ຄັງສົ່ງເສີມວິຊາການພາກລັດ | ສິບຫ້າ ສ່ວນຮ້ອຍ. |

**ມາດຕາ 25 ການບັນທຶກບັນຊີ**

ການບັນທຶກບັນຊີຂອງ "ກພບ" ຕ້ອງເປັນເອກະພາບນຳໃຊ້ລະບົບບັນຊີດຽວ ຕາມແບບພິມຂອງ ກົມ ພັດທະນາຊົນນະບົດ ກຳນົດ ດັ່ງນີ້:

1. ບັນຊີຕິດຕາມ ລາຍຮັບ - ລາຍຈ່າຍ ເງິນສົດ ຂອງ "ກພບ" ປະຈຳເດືອນ;
2. ບັນຊີຕິດຕາມ ການຝາກ - ຖອນ ຂອງທະນາຄານ "ກພບ" ປະຈຳເດືອນ;
3. ບັນຊີຕິດຕາມ ການກູ້ ແລະ ສົ່ງດອກເບ້ຍ ຂອງສະມາຊິກ "ກພບ" ປະຈຳເດືອນ;

4. ບັນຊີເງິນສົດ ແລະ ແຍກປະເພດ (ບັນຊີລວມ);
5. ລາຍງານການດຳເນີນງານຂອງ "ກພບ" ປະຈຳເດືອນ;
6. ສະຫຼຸບຖານະການເງິນ (ດຸ່ນດ່ຽງ) "ກພບ" ປະຈຳເດືອນ.

**ມາດຕາ 26 ການລາຍງານ**

"ກພບ" ຕ້ອງລາຍງານສະພາບການເຄື່ອນໄຫວ ຫຼື ການດຳເນີນງານ ແລະ ຖານະການເງິນຂອງຕົນ ຊ້າສຸດບໍ່ໃຫ້ກາຍວັນທີ ສິບຫ້າ ຂອງແຕ່ລະເດືອນ ໃຫ້ຄະນະຄຸ້ມຄອງ "ກພບ" ຂັ້ນເມືອງຊາບ ເປັນປົກກະຕິ.

## ໝວດທີ 5
## ການປ່ອຍເງິນກູ້

**ມາດຕາ 27 ເງື່ອນໄຂການປ່ອຍເງິນກູ້**

ການປ່ອຍເງິນກູ້ຂອງ "ກພບ" ໃຫ້ສະມາຊິກ ຕ້ອງຕິດພັນກັບການແກ້ໄຂ ສະບຽງອາຫານ, ຜະລິດເປັນສິນຄ້າ ເພື່ອຕອບສະໜອງໃຫ້ແກ່ຄອບຄົວ ແລະ ສັງຄົມ ປະກອບມີເງື່ອນໄຂ ດັ່ງນີ້:

1. ການປູກຝັງ ແລະ ລ້ຽງສັດ;
2. ຫັດຖະກຳ ແລະ ປຸງແຕ່ງກະສິກຳ;
3. ການບຸກເບີກ ແລະ ຂະຫຍາຍເນື້ອທີ່ທຳການຜະລິດ;
4. ການບໍລິການ;
5. ແກ້ໄຂສຸກເສີນ ໃນກໍລະນີເຈັບເປັນຂອງສະມາຊິກ.

**ມາດຕາ 28 ການປ່ອຍກູ້ ແລະ ວົງເງິນປ່ອຍກູ້ຂອງ "ກພບ"**

ການປ່ອຍກູ້ ແລະ ວົງເງິນປ່ອຍກູ້ຂອງ "ກພບ" ໄດ້ແບ່ງອອກເປັນ ສອງ ໄລຍະ ດັ່ງນີ້:

1. ການປ່ອຍສິນເຊື່ອ ໄລຍະສັ້ນ ແມ່ນ ຫົກ ເດືອນ ຫາ ໜຶ່ງ ປີ, ວົງເງິນກູ້ຢືມຕໍ່ສະມາຊິກຄອບຄົວໜຶ່ງບໍ່ໃຫ້ເກີນ ຈຳນວນ ຫ້າ ລ້ານ ກີບ ຕໍ່ຄັ້ງ;
2. ການປ່ອຍສິນເຊື່ອ ໄລຍະກາງ ແມ່ນ ໜຶ່ງ ປີ ຫາ ສອງ ປີ, ວົງເງິນກູ້ຢືມຕໍ່ສະມາຊິກຄອບຄົວໜຶ່ງບໍ່ໃຫ້ເກີນ ຈຳນວນ ສິບ ລ້ານ ກີບ ຕໍ່ຄັ້ງ;
3. ການປ່ອຍກູ້ສຸກເສີນ ວົງເງິນກູ້ຢືມຕໍ່ສະມາຊິກຄອບຄົວໜຶ່ງບໍ່ໃຫ້ເກີນ ໜຶ່ງລ້ານ ກີບ ຕໍ່ຄັ້ງ.

**ມາດຕາ 29 ຂັ້ນຕອນການປ່ອຍກູ້**

ຂັ້ນຕອນການປ່ອຍກູ້ຂອງ "ກພບ" ສາມາດປ່ອຍກູ້ໃຫ້ແກ່ສະມາຊິກຂອງຕົນ ຕາມແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານ ແລະ ແຜນຄວາມຕ້ອງການທຶນ ຂອງສະມາຊິກ "ກພບ" ແຕ່ລະໄລຍະ, ຊຶ່ງສະມາຊິກຕ້ອງປະກອບເອກະສານ ແລະ ປະຕິບັດຂັ້ນຕອນ ດັ່ງນີ້:

1. ໜັງສືສະເໜີຂໍກູ້ຢືມ ຕາມແບບພິມ ທີ່ "ກພບ" ກຳນົດ;
2. ຄະນະບໍລິຫານ "ກພບ" ຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງ;
3. ສັນຍາກູ້ຢືມເງິນ ໂດຍມີການລົງລາຍເຊັນຮ່ວມກັນ ລະຫວ່າງ ຜູ້ໃຫ້ກູ້ຢືມ ຫຼື "ກພບ" ແລະ ຜູ້ກູ້ຢືມ ຫຼື ສະມາຊິກ.

**ມາດຕາ 30 ການກຳນົດອັດຕາດອກເບ້ຍ**

ການກຳນົດອັດຕາດອກເບ້ຍຂອງ "ກພບ" ໃຫ້ແກ່ສະມາຊິກ ປະຕິບັດ ດັ່ງນີ້:

1. ການປ່ອຍສິນເຊື່ອໄລຍະສັ້ນ ແມ່ນ ຄິດໄລ່ອັດຕາດອກເບ້ຍບໍ່ເກີນ ຫົກສ່ວນຮ້ອຍ ຕໍ່ປີ;

2. ການປ່ອຍສິນເຊື່ອໄລຍະກາງ ແມ່ນ ຄິດໄລ່ອັດຕາດອກເບ້ຍບໍ່ເກີນ ແປດສ່ວນຮ້ອຍ ຕໍ່ປີ;
3. ການກູ້ຢືມໃນກໍລະນີສຸກເສີນ (ເຈັບເປັນ) ແມ່ນສາມາດກູ້ຢືມໄດ້ ໂດຍບໍ່ຄິດໄລ່ດອກເບ້ຍ ແຕ່ບໍ່ໃຫ້ເກີນ ສາມ ເດືອນ ຕ້ອງສົ່ງຕົ້ນທຶນຄືນ.

**ມາດຕາ 31 ການລະເມີດສັນຍາເງິນກູ້**

ໃນກໍລະນີສະມາຊິກ "ກພບ" ຫາກບໍ່ຊໍາລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ ຕາມທີ່ໄດ້ກໍານົດໄວ້ໃນສັນຍາກູ້ຢືມ ຄະນະບໍລິຫານ "ກພບ" ສາມາດນໍາໃຊ້ມາດຕະການໃດໜຶ່ງ ດັ່ງນີ້:

1. ດໍາເນີນການໄກ່ເກ່ຍ ແລະ ປະນີປະນອມ;
2. ປັບໃໝຕາມທີ່ໄດ້ກໍານົດໄວ້ໃນສັນຍາ;
3. ຕັດສິດການເປັນສະມາຊິກ;
4. ປະຕິບັດຕາມຂັ້ນຕອນລະບຽບຂອງກົດໝາຍ.

**ມາດຕາ 32 ການຮັກສາເງິນສົດ**

ການຮັກສາເງິນສົດຂອງ "ກພບ" ສາມາດຮັກສາເງິນສົດໄວ້ໄດ້ບໍ່ໃຫ້ເກີນ ສອງລ້ານ ກີບ. ນອກຈາກນັ້ນ ແມ່ນໃຫ້ຝາກໄວ້ຢູ່ທະນາຄານ ທີ່ "ກພບ" ໄດ້ເປີດບັນຊີໄວ້.

## ໝວດທີ 6
## ການໂຮມ ແລະ ການຍຸບເລີກ

**ມາດຕາ 33 ການໂຮມ**

ກອງທຶນອື່ນ ທີ່ເຄື່ອນໄຫວໃນບ້ານດຽວກັນ ສາມາດໂຮມເຂົ້າກັບ "ກພບ" ແຕ່ຕ້ອງມີມະຕິເຫັນດີຈາກກອງປະຊຸມ "ກພບ", ມີການປັບປຸງການຈັດຕັ້ງ ແລະ ໄດ້ຮັບການອະນຸຍາດສ້າງຕັ້ງ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 34 ການຍຸບເລີກ**

ການຍຸບເລີກ "ກພບ" ຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ດ້ວຍຄວາມສະໝັກໃຈ ໂດຍມີມະຕິກອງປະຊຸມ "ກພບ";
2. ບໍ່ມີການເຄື່ອນໄຫວ ຫຼື ດໍາເນີນກິດຈະກໍາ ຕາມທີ່ໄດ້ຮັບອະນຸຍາດ ພາຍໃນເວລາ ສາມ ເດືອນ ນັບແຕ່ວັນໄດ້ຮັບອະນຸຍາດ;
3. ມີການລະເມີດກົດໝາຍຢ່າງຮ້າຍແຮງ.

ກອງທຶນພັດທະນາຂັ້ນບ້ານ ຢູ່ ເມືອງທຸກຍາກ ທີ່ຍຸບເລີກ ຕ້ອງມີການຊໍາລະສະສາງຊັບສິນ ແລະ ໜີ້ສິນ ຢ່າງຄົບຖ້ວນ ຕາມກົດໝາຍ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 35 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກໍາໃດໜຶ່ງ ດັ່ງນີ້:

1. ຂັດຂວາງການເຄື່ອນໄຫວຂອງ "ກພບ";
2. ແອບອ້າງຊື່ ຫຼື ນໍາໃຊ້ຊື່ ຂອງ "ກພບ" ເຄື່ອນໄຫວໃນທາງທີ່ບໍ່ຖືກຕ້ອງ;

3. ສວຍໃຊ້ ຫຼື ແຊກແຊງການຈັດຕັ້ງ ພາຍໃນ "ກພບ";
4. ສ້າງຕັ້ງ ແລະ ເຄື່ອນໄຫວເປັນ "ກພບ" ໂດຍບໍ່ໄດ້ຮັບອະນຸຍາດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 36 ຂໍ້ຫ້າມສຳລັບກອງທຶນ**

ຫ້າມ "ກພບ" ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ດຳເນີນທຸລະກິດທີ່ບໍ່ຖືກຕ້ອງ ຕາມທີ່ໄດ້ຮັບອະນຸຍາດ;
2. ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງ, ບໍ່ຊັດເຈນ ຕໍ່ເຈົ້າໜ້າທີ່ ທີ່ບໍ່ກ່ຽວຂ້ອງ;
3. ປອມແປງ, ບິດເບືອນຂໍ້ມູນຂອງຕົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເພື່ອຜົນປະໂຫຍດຂອງ"ກພບ";
4. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນ ແກ່ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 37 ຂໍ້ຫ້າມສຳລັບຄະນະຄຸ້ມຄອງ "ກພບ"**

ຫ້າມ ຄະນະຄຸ້ມຄອງ "ກພບ" ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ເປີດເຜີຍຂໍ້ມູນ ທີ່ເປັນຄວາມລັບຂອງ "ກພບ" ເວັ້ນເສຍແຕ່ໄດ້ຮັບອະນຸຍາດ ຈາກ "ກພບ";
2. ທວງ, ຮຽກເອົາ ຫຼື ຮັບສິນບົນ ຈາກ "ກພບ";
3. ອອກ ຫຼື ປະຕິເສດການອອກໃບອະນຸຍາດສ້າງຕັ້ງ "ກພບ" ໂດຍບໍ່ຖືກຕ້ອງ ຕາມຂໍ້ຕົກລົງສະບັບນີ້;
4. ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງ "ກພບ";
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ຄະນະຄຸ້ມຄອງກອງທຶນ

**ມາດຕາ 38 ຄະນະຄຸ້ມຄອງ "ກພບ"**

ຄະນະຄຸ້ມຄອງ "ກພບ" ແມ່ນ ການຈັດຕັ້ງທີ່ບໍ່ປະຈຳການ, ມີພາລະບົດບາດ ເປັນເສນາທິການຊ່ວຍລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໃນການຕິດຕາມ, ກວດກາ ແລະ ປະເມີນຜົນ ການຄຸ້ມຄອງ "ກພບ" ຊຶ່ງປະກອບ ມີ ສາມ ຂັ້ນ ດັ່ງນີ້:

1. ຄະນະຄຸ້ມຄອງ "ກພບ" ຂັ້ນສູນກາງ ແມ່ນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງ ກົມພັດທະນາຊົນນະບົດ;
2. ຄະນະຄຸ້ມຄອງ "ກພບ" ຂັ້ນແຂວງ ແມ່ນ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
3. ຄະນະຄຸ້ມຄອງ "ກພບ" ຂັ້ນເມືອງ ແມ່ນ ເຈົ້າເມືອງ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

**ມາດຕາ 39 ໂຄງປະກອບຂອງຄະນະຄຸ້ມຄອງ "ກພບ" ຂັ້ນສູນກາງ**

ຄະນະຄຸ້ມຄອງ "ກພບ" ຂັ້ນສູນກາງ ປະກອບ ດ້ວຍ:

1. ທ່ານ ລັດຖະມົນຕີ ຫຼື ຮອງລັດຖະມົນຕີ, ຜູ້ຊີ້ນຳວຽກງານພັດທະນາຊົນນະບົດ ເປັນຫົວໜ້າ;
2. ທ່ານ ຫົວໜ້າ ກົມພັດທະນາຊົນນະບົດ ເປັນຮອງ;
3. ທ່ານ ຮອງຫົວໜ້າ ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ;

4. ທ່ານ ຮອງຫົວໜ້າ ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ;
5. ທ່ານ ຮອງຫົວໜ້າ ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ເປັນຄະນະ;
6. ທ່ານ ຮອງຫົວໜ້າ ກົມງົບປະມານແຫ່ງລັດ, ກະຊວງການເງິນ ເປັນຄະນະ;
7. ທ່ານ ຮອງຫົວໜ້າ ຄັງເງິນແຫ່ງຊາດ, ກະຊວງການເງິນ ເປັນຄະນະ;
8. ທ່ານ ຮອງຫົວໜ້າ ກົມສົ່ງເສີມກະສິກຳ ແລະ ສະຫະກອນ ເປັນຄະນະ;
9. ທ່ານ ຮອງຫົວໜ້າ ຫ້ອງການສູນກາງແນວລາວສ້າງຊາດ ເປັນຄະນະ;
10. ທ່ານ ຮອງຫົວໜ້າ ຫ້ອງການສູນກາງສະຫະພັນກຳມະບານລາວ ເປັນຄະນະ;
11. ທ່ານ ຮອງຫົວໜ້າ ຫ້ອງການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຄະນະ;
12. ທ່ານ ຮອງຫົວໜ້າ ຫ້ອງການສູນກາງສະຫະພັນແມ່ຍິງລາວ ເປັນຄະນະ.

**ມາດຕາ 40 ໂຄງປະກອບຂອງຄະນະຄຸ້ມຄອງ "ກພບ" ຂັ້ນແຂວງ**

ຄະນະຄຸ້ມຄອງ "ກພບ" ຂັ້ນແຂວງ ປະກອບ ດ້ວຍ:

1. ທ່ານ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ, ຜູ້ຊີ້ນຳວຽກງານພັດທະນາຊົນນະບົດ ເປັນຫົວໜ້າ;
2. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນຮອງ;
3. ທ່ານ ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນຂັ້ນແຂວງ ເປັນຄະນະ;
4. ທ່ານ ຮອງຫົວໜ້າທະນາຄານແຫ່ງ ສປປ ລາວ ປະຈຳພາກ ເປັນຄະນະ;
5. ທ່ານ ຮອງຫົວໜ້າພະແນກການເງິນຂັ້ນແຂວງ ເປັນຄະນະ;
6. ທ່ານ ຮອງປະທານແນວລາວສ້າງຊາດຂັ້ນແຂວງ ເປັນຄະນະ;
7. ທ່ານ ຮອງປະທານສະຫະພັນກຳມະບານລາວຂັ້ນແຂວງ ເປັນຄະນະ;
8. ທ່ານ ຮອງເລຂາຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນແຂວງ ເປັນຄະນະ;
9. ທ່ານ ຮອງປະທານສະຫະພັນແມ່ຍິງລາວຂັ້ນແຂວງ ເປັນຄະນະ.

**ມາດຕາ 41 ໂຄງປະກອບຂອງຄະນະຄຸ້ມຄອງ "ກພບ" ຂັ້ນເມືອງ**

ຄະນະຄຸ້ມຄອງ "ກພບ" ຂັ້ນເມືອງ ປະກອບ ດ້ວຍ:

1. ທ່ານ ຮອງເຈົ້າເມືອງ, ຜູ້ຊີ້ນຳວຽກງານພັດທະນາຊົນນະບົດ ເປັນຫົວໜ້າ;
2. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຮອງ;
3. ທ່ານ ຮອງຫົວໜ້າຫ້ອງການແຜນການ ແລະ ການລົງທຶນຂັ້ນເມືອງ ເປັນຄະນະ;
4. ທ່ານ ຮອງຫົວໜ້າຫ້ອງການການເງິນຂັ້ນເມືອງ ເປັນຄະນະ;
5. ທ່ານ ຮອງປະທານແນວລາວສ້າງຊາດຂັ້ນເມືອງ ເປັນຄະນະ;
6. ທ່ານ ຮອງປະທານສະຫະພັນກຳມະບານລາວຂັ້ນເມືອງ ເປັນຄະນະ;
7. ທ່ານ ຮອງເລຂາຄະນະຊາວໜຸ່ມປະຊາຊົນປະຕິວັດລາວຂັ້ນເມືອງ ເປັນຄະນະ;
8. ທ່ານ ຮອງປະທານສະຫະພັນແມ່ຍິງຂັ້ນເມືອງ ເປັນຄະນະ.

**ມາດຕາ 42 ສິດ ແລະ ໜ້າທີ່ຂອງຄະນະຄຸ້ມຄອງ "ກພບ"**

ຄະນະຄຸ້ມຄອງ "ກພບ" ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ປະຊາຊົນທີ່ຢູ່ບ້ານເປົ້າໝາຍ ໃຫ້ເຂົ້າໃຈຕໍ່ນະໂຍບາຍ, ຈຸດ ປະສົງ ແລະ ຫຼັກການຂອງການນຳໃຊ້ "ກພບ";

2. ພິຈາລະນາ ຮັບຮອງເອົາ ບ້ານເປົ້າໝາຍ ແລະ ຈັດລຽງບຸລິມະສິດໃນການສ້າງຕັ້ງ "ກພບ";
3. ພິຈາລະນາ ແລະ ແກ້ໄຂຂໍ້ສະເໜີ ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ "ກພບ";
4. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຄຸ້ມຄອງ ແລະ ການນຳໃຊ້ "ກພບ";
5. ສະໜອງຂໍ້ມູນ ຂ່າວສານ ໃຫ້ແກ່ "ກພບ";
6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ການນຳໃຊ້ "ກພບ" ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 43 ກອງເລຂາຄະນະຄຸ້ມຄອງ "ກພບ"**

ກອງເລຂາຄະນະຄຸ້ມຄອງ "ກພບ" ແມ່ນການຈັດຕັ້ງທີ່ປະຈຳການ, ມີພາລະບົດບາດເປັນເສນາທິການໃຫ້ຄະນະຄຸ້ມຄອງ "ກພບ" ຂັ້ນຂອງຕົນ ຊຶ່ງ ປະກອບ ດ້ວຍ:

1. ຂັ້ນສູນກາງ ແມ່ນ ກົມພັດທະນາຊົນນະບົດ ກະຊວງກະສິກຳ ແລະ ປ່າໄມ້;
2. ຂັ້ນແຂວງ ແມ່ນ ຂະແໜງພັດທະນາຊົນນະບົດ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
3. ຂັ້ນເມືອງ ແມ່ນ ໜ່ວຍງານພັດທະນາຊົນນະບົດ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

**ມາດຕາ 44 ສິດ ແລະ ໜ້າທີ່ຂອງກອງເລຂາຄະນະຄຸ້ມຄອງ "ກພບ"**

ກອງເລຂາຄະນະຄຸ້ມຄອງ "ກພບ" ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເກັບກຳ ແລະ ສັງລວມຂໍ້ມູນ ກ່ຽວກັບການສ້າງຕັ້ງກອງທຶນພັດທະນາຂັ້ນບ້ານ ພ້ອມທັງສະເໜີຕໍ່ຄະນະຄຸ້ມຄອງ "ກພບ" ພິຈາລະນາ;
2. ຕິດຕາມ ແລະ ຊຸກຍູ້ "ກພບ" ໃຫ້ເຄື່ອນໄຫວຕາມກົດລະບຽບ ແລະ ແຜນດຳເນີນງານຂອງຕົນວາງອອກ ໃນແຕ່ລະໄລຍະ;
3. ຈັດຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນຂອງ "ກພບ";
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະຄຸ້ມຄອງ "ກພບ".

## ໝວດທີ 9
## ການຄຸ້ມຄອງ ແລະ ການກວດກາກອງທຶນ

**ມາດຕາ 45 ການຄຸ້ມຄອງ "ກພບ"**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງ "ກພບ" ຢ່າງລວມສູນ ໂດຍມອບໃຫ້ ກົມພັດທະນາຊົນນະບົດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

ການຈັດຕັ້ງທີ່ຮັບຜິດຊອບດ້ານວິຊາການ ໃນການຄຸ້ມຄອງ "ກພບ" ປະກອບ ດ້ວຍ:

1. ຂັ້ນສູນກາງ ແມ່ນ ກົມພັດທະນາຊົນນະບົດ ກະຊວງກະສິກຳ ແລະ ປ່າໄມ້;
2. ຂັ້ນແຂວງ ແມ່ນ ຂະແໜງພັດທະນາຊົນນະບົດ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
3. ຂັ້ນເມືອງ ແມ່ນ ໜ່ວຍງານພັດທະນາຊົນນະບົດ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

**ມາດຕາ 46 ສິດ ແລະ ໜ້າທີ່ຂອງ ກົມພັດທະນາຊົນນະບົດ**

ໃນການຄຸ້ມຄອງວຽກງານ "ກພບ" ກົມພັດທະນາຊົນນະບົດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການຄຸ້ມຄອງ ແລະ

ການນຳໃຊ້ "ກພບ" ເພື່ອສະເໜີ ກະຊວງ ແລະ ລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ "ກພບ" ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ແລະ ນິຕິກຳອື່ນກ່ຽວກັບວຽກງານ "ກພບ";
4. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ "ກພບ";
5. ປະສານສົມທົບກັບການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນ ກ່ຽວກັບວຽກງານຄຸ້ມຄອງ ແລະ ນຳໃຊ້ "ກພບ" ລວມທັງການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານດັ່ງກ່າວ;
6. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນທີ່ຮັບຜິດຊອບ ກ່ຽວກັບວຽກງານ "ກພບ";
7. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານ "ກພບ";
8. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານ "ກພບ" ໃຫ້ກະຊວງ ແລະ ລັດຖະບານ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 47 ສິດ ແລະ ໜ້າທີ່ຂອງຂະແໜງພັດທະນາຊົນນະບົດ**

ໃນການຄຸ້ມຄອງວຽກງານ "ກພບ" ຂະແໜງພັດທະນາຊົນນະບົດ ຂອງ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານ "ກພບ";
2. ໂຄສະນາ, ເຜີຍແຜ່, ຊີ້ນຳ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້, ກົດລະບຽບ ແລະ ແຜນດຳເນີນງານຂອງ "ກພບ";
3. ເກັບກຳຂໍ້ມູນ ແລະ ສັງລວມຈຳນວນບ້ານ, ຄອບຄົວ ແລະ ສະມາຊິກ "ກພບ" ເພື່ອສ້າງເປັນຖານຂໍ້ມູນໃນການ ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;
4. ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນທີ່ຮັບຜິດຊອບວຽກງານ "ກພບ";
5. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງ "ກພບ";
6. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານ "ກພບ";
7. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານ "ກພບ" ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 48 ສິດ ແລະ ໜ້າທີ່ຂອງໜ່ວຍງານພັດທະນາຊົນນະບົດ**

ໃນການຄຸ້ມຄອງວຽກງານ "ກພບ" ໜ່ວຍງານພັດທະນາຊົນນະບົດ ຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານ "ກພບ" ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນວຽກງານດັ່ງກ່າວ;

2. ເຜີຍແຜ່, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້, ກົດລະບຽບພາຍໃນ ແລະ ແຜນດຳເນີນງານຂອງ "ກພບ";
3. ເກັບກຳຂໍ້ມູນ ແລະ ສຶກສາຄົ້ນຄວ້າ ບ້ານເປົ້າໝາຍທີ່ຈະສ້າງຕັ້ງ "ກພບ" ເພື່ອສະເໜີຂັ້ນເທິງພິຈາລະນາ;
4. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລະກອນທີ່ຮັບຜິດຊອບວຽກງານ "ກພບ";
5. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງ "ກພບ";
6. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານ "ກພບ" ໃຫ້ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ອົງການປົກຄອງເມືອງຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 49 ການກວດກາ "ກພບ"**

ການຈັດຕັ້ງທີ່ຮັບຜິດຊອບໃນການກວດກາ "ກພບ" ປະກອບດ້ວຍ ການກວດກາພາຍໃນ ຫຼື ການກວດກາໂດຍການຈັດຕັ້ງທີ່ຄຸ້ມຄອງ "ກພບ" ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້ ແລະ ການກວດກາພາຍນອກ ໂດຍສະເພາະ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 50 ເນື້ອໃນການກວດກາ**

ການກວດກາວຽກງານ "ກພບ" ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້, ກົດລະບຽບພາຍໃນ ແລະ ແຜນດຳເນີນງານຂອງ "ກພບ";
2. ການປະຕິບັດໜ້າທີ່ຂອງ ຄະນະບໍລິຫານ, ຄະນະທີ່ປຶກສາ ແລະ ສະມາຊິກຂອງ "ກພບ";
3. ການຜະລິດ, ການຄ້າ, ການບໍລິການ ຫຼື ການດຳເນີນງານ ຂອງສະມາຊິກ ທີ່ກູ້ຢືມເງິນຈາກ "ກພບ";
4. ວຽກງານອື່ນ ຕາມການສະເໜີຂອງ ກອງທຶນ, ບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 51 ການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງກ່ຽວກັບ "ກພບ" ເປັນຕົ້ນ ຂໍ້ຂັດແຍ່ງລະຫວ່າງ ສະມາຊິກ, ສະມາຊິກ ກັບ ຄະນະບໍລິຫານ "ກພບ", ຄະນະທີ່ປຶກສາ, ຄະນະກວດກາ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ ໃຫ້ແກ້ໄຂດ້ວຍຮູບການ ໄກ່ເກ່ຍ ຫຼື ປະນີປະນອມ ໂດຍກອງທຶນເອງ ຫຼື ການຈັດຕັ້ງລັດທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 52 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດກາ "ກພບ" ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 53** ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 54** ການຈັດຕັ້ງປະຕິບັດ

ມອບໃຫ້ ກົມພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 55** ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ບົດແນະນຳການສ້າງຕັ້ງກອງທຶນພັດທະນາຂັ້ນບ້ານຂອງ 47 ເມືອງທຸກຍາກ ສະບັບເລກທີ 876/ກຜທ.04, ລົງວັນທີ 03 ກັນຍາ 2004.

ລັດຖະມົນຕີ

**ປອ. ເພັດ ພົມພິພັກ**